# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. **ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ........... ໜ້າ 01-07**

II. **ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................. ໜ້າ 08-11**

III. **ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ຄຕພ.................................ໜ້າ 12**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ມັງກອນ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 02/01/2023, ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ໄດ້ມີຄຳເຫັນກ່ຽວກັບການຮັບຮອງເອົາມະຕິຂອງກົມການເມືອງ ສະບັບເລກທີ 31-NQ/TW ທີ່ກຳນົດເປົ້າໝາຍ ແລະ ໜ້າທີ່ໃນການພັດທະນານະຄອນໂຮ່ຈິມິນ ຮອດປີ 2030, ວິໄສທັດຮອດປີ 2045. ພ້ອມນີ້, ໄດ້ທົບທວນຄືນຜົນສຳເລັດໃນປີ 2022 ຜ່ານມາ, ຊຶ່ງ ສສ ຫວຽດນາມ ເອົາໃຈໃສ່ສູງຕໍ່ການຟື້ນຟູເສດຖະກິດ-ສັງຄົມ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19, ໄພທຳມະຊາດ ແລະ ອື່ນໆ ດ້ວຍຄວາມເປັນເອກະພາບ ແລະ ການຕັດສິນໃຈທີ່ເດັດດ່ຽວໃນທົ່ວປວງຊົນ ເຮັດໃຫ້ ສສ ຫວຽດນາມ ສາມາດບັນລຸໄດ້ 14 ຄາດໝາຍສູ້ຊົນຈາກທັງໝົດ 15 ຄາດໝາຍສູ້ຊົນໃນປີ 2022; GDP ບັນລຸໄດ້ 8% (ສູງກວ່າຄາດຄະເນ 6-6,5%); ຈັດເກັບງົບປະມານແຫ່ງລັດເພີ່ມຂຶ້ນ 20%; ການລົງທຶນພາຍໃນເພີ່ມຂຶ້ນ 12,5 %; ການລົງທຶນຂອງຕ່າງປະເທດ ບັນລຸ 22 ຕື້ໂດລາ ເພີ່ມຂຶ້ນ 16% ແລະ ການນຳເຂົ້າ-ສົ່ງອອກ ບັນລຸ 740 ຕື້ໂດລາ ເພີ່ມຂຶ້ນ 10% ທຽບໃສ່ປີ 2021.

ວັນທີ 11-12/01/2023, ສະຫາຍ ຟາມ ມິງຈິງ, ນາຍົກລັດຖະມົນຕີ ແຫ່ງ ສສ ຫວຽດນາມ ພ້ອມຄະນະຜູ້ແທນຂັ້ນສູງ ໄດ້ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ; ເຂົ້າຮ່ວມກອງປະຊຸມຄະນະກຳມະການຮ່ວມມືທະວິພາຄີລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ຄັ້ງທີ 45 ແລະ ເຂົ້າຮ່ວມພິທີສະຫຼຸບປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ. ສອງຝ່າຍ ໄດ້ທົບທວນຄືນ ແລະ ຕີລາຄາສູງຕໍ່ການຮ່ວມມືຮອບດ້ານ; ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ຂໍ້ຕົກລົງຮ່ວມມືສອງຝ່າຍກໍຄືການຕົກລົງຂອງການນຳຂັ້ນສູງຂອງສອງປະເທດໃນທຸກໆດ້ານຕະຫຼອດໄລຍະຜ່ານມາ ເປັນຕົ້ນການພົວພັນຮ່ວມມືດ້ານການເມືອງສ້າງຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນ ໃນລະດັບສູງ, ການໄປມາຫາສູ່, ການ ພົບປະຂອງການນຳຂັ້ນສູງ ແລະ ທຸກລະດັບ; ການຮ່ວມມືດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ, ດ້ານເສດຖະກິດ-ການຄ້າ, ການລົງທຶນ, ການສຶກສາ, ສາທາລະນະສຸກ, ຖະແຫຼງຂ່າວ, ວັດທະນະທຳ, ກິລາ, ທ່ອງທ່ຽວ, ອົງການຈັດຕັ້ງມະຫາຊົນ; ການຮ່ວມມືລະຫວ່າງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ. ພ້ອມກັນນັ້ນ, ສອງຝ່າຍໄດ້ລົງນາມເອກະສານຮ່ວມມືສອງຝ່າຍ ຈຳນວນ 10 ສະບັບຄື: 1) ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການສ້າງກົນໄກການປຶກສາຫາລືວຽກງານການທູດເສດຖະກິດລະຫວ່າງສອງກະຊວງການຕ່າງປະເທດ; 2) ແຜນງານການຄົ້ນຄວ້າ ແລະ ຝຶກອົບຮົມໃຫ້ແກ່ນັກການທູດ ແລະ ພະນັກງານຂອງສອງກະຊວງການຕ່າງປະເທດ; 3) ສົນທິສັນຍາ ວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນວຽກງານຍຸຕິທຳ; 4) ສັນຍາລະຫວ່າງລັດຖະບານລາວ ແລະ ລັດຖະບານ ຫວຽດນາມ ວ່າດ້ວຍຄູ່ຮ່ວມມືດີຈີຕອນ; 5) ອະນຸສັນຍາ ວ່າດ້ວຍການຮ່ວມມືກໍ່ສ້າງບຸກຄາລະກອນລະຫວ່າງສອງລັດຖະບານ; 6) ແຜນການຮ່ວມມືປີ 2023 ລະຫວ່າງ ກະຊວງສຶກສາທິການ ແລະ ກິລາລາວ ແລະ ກະຊວງສຶກສາທິການ ແລະ ກໍ່ສ້າງ ຫວຽດນາມ; 7) ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສອງກະຊວງສາທາລະນະສຸກ; 8) ບົດບັນທຶກການສ້າງຕັ້ງສາຍພົວພັນຮ່ວມມືມິດຕະພາບລະຫວ່າງແຂວງຈຳປາສັກ ແລະ ແຂວງກວ້າງຈີ້; 9) ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານນະວັດຕະກຳທາງດ້ານການເງິນ ແລະ ລະບົບຊຳລະລະຫວ່າງ ທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດຫວຽດນາມ ແລະ 10) ບົດບັນທຶກຄວາມເຂົ້າໃຈລະຫວ່າງ ກະຊວງໂຍທາທິການ ແລະ ຂົນສົ່ງລາວ ແລະ ກະຊວງຄົມມະນາຄົມ ແລະ ຂົນສົ່ງ ຫວຽດນາມ ກ່ຽວກັບການຮ່ວມມືຮອບດ້ານຂົງເຂດຄົມມະນາຄົມ ແລະ ຂົນສົ່ງທາງນ້ຳ.

### 2). ພັກກອມມູນິດຈີນ

ກ້າວເຂົ້າສູ່ປີໃໝ່ 2023, ສປ ຈີນ ໄດ້ເປີດສາກ ໂດຍສະເພາະແມ່ນການປະກາດເປີດປະເທດຢ່າງເຕັມຮູບແບບ ຕັ້ງແຕ່ວັນທີ 08 ມັງກອນ 2023 ເປັນຕົ້ນໄປ, ຜູ້ເດີນທາງ ທີ່ມີຜົນກວດເປັນລົບ ພາຍໃນ 48 ຊົ່ວໂມງ ກໍສາມາດເດີນທາງເຂົ້າ ສປ ຈີນ ໄດ້ແລ້ວ, ຊຶ່ງເຮັດໃຫ້ປະຊາຊົນຈີນ ທີ່ຢູ່ຕ່າງປະເທດ ກັບຄືນຢ້ຽມຢາມປະເທດເປັນຈຳນວນຫຼວງຫຼາຍ, ຂະນະທີ່ ປະຊາຊົນຈີນ ກໍເດີນທາງທ່ອງທ່ຽວປະເທດຕ່າງໆ ຢ່າງຫຼວງຫຼາຍເຊັ່ນກັນ, ເປັນການຊ່ວຍຟື້ນຟູຂະແໜງການທ່ອງທ່ຽວໃນໂລກ.

ວັນທີ 01/01/2023, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ກໍໄດ້ກ່າວອວຍພອນປີໃໝ່ 2023 ໂດຍມີເນື້ອໃນບາງຕອນວ່າ: ໃນປີ 2022 ຜ່ານມາ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ໄດ້ສຳເລັດລົງຢ່າງຈົບງາມ ບົນພື້ນຖານການສ້າງປະເທດສັງຄົມນິຍົມທີ່ມີສີສັນທີ່ທັນສະໄໝຮອບດ້ານ, ຊຸກຍູ້ຄວາມຈະເລີນຮຸ່ງເຮືອງໃຫ້ຊົນຊາດຈີນ. ສປ ຈີນ ສືບຕໍ່ເປັນປະເທດທີ່ມີເສດຖະກິດໃຫຍ່ເປັນອັນດັບສອງຂອງໂລກ, GDP ບັນລຸ 120,000 ຕື້ຢວນ ພາຍໃຕ້ສະພາບການປ່ຽນແປງຂອງໂລກ, ການແຜ່ລະບາດຂອງພະຍາດໂຄວິດ-19, ວິກິດການຂາດແຄນທາງດ້ານພະລັງງານ ແລະ ອາຫານໃນທົ່ວໂລກ ແລະ ອື່ນໆ. ຍິ່ງໄປກວ່ານັ້ນ, ສປ ຈີນ ສາມາດລຶບລ້າງຄວາມທຸກຍາກ, ຊຸກຍູ້ການສ້າງຄວາມຈະເລີນຮຸ່ງເຮືອງໃຫ້ຊົນນະບົດຢ່າງຮອບດ້ານ ແລະ ສຸມໃສ່ການແກ້ໄຂບັນຫາຂອງປະຊາຊົນຢ່າງທັນການ.

ວັນທີ 04/01/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ເຟີດີນານ ໂຣມົວເດສ ມາໂກສ, ປະທານາທິບໍດີຟີລິບປິນ ໃນໂອກາດຢ້ຽມຢາມທາງລັດຖະກິດ ສປ ຈີນ. ສອງຝ່າຍໄດ້ກຳນົດ 4 ຂົງເຂດຈຸດສຸມໃນການພົວພັນຄື: ກະສິກຳ, ການກໍ່ສ້າງພື້ນຖານໂຄງລ່າງ, ພະລັງງານ ແລະ ວັດທະນະທຳ. ສອງຝ່າຍຈະຮ່ວມມືແກ້ໄຂຂໍ້ຂັດແຍ່ງທາງທະເລດ້ວຍວິທີທີ່ເໝາະສົມ, ຮ່ວມມືກັນທາງດ້ານນ້ຳມັນເຊື້ອໄຟ ແລະ ແກ໋ສທຳມະຊາດຄືນໃໝ່ ໂດຍສະເພາະຢູ່ເຂດທະເລທີ່ມີຂໍ້ຂັດແຍ່ງກັນ ແລະ ຮ່ວມມືກັນທາງດ້ານພະລັງງານສີຂຽວ. ຟີລິບປິນ ເຫັນດີເພີ່ມທະວີການຮ່ວມມືຢ່າງຮອບດ້ານກັບ ສປ ຈີນ, ຮ່ວມກັນແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ສອງປະເທດພວມປະເຊີນຢູ່ໃຫ້ດີກວ່າເກົ່າ ແລະ ຮ່ວມກັນສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນສອງຊາດ.

ວັນທີ 09/01/2023, ທ່ານ ສີ ຈິ້ນຜິງ ໄດ້ພົບປະຜ່ານວິດີໂອທາງໄກກັບ ທ່ານ Milose Zemana, ປະທານາທິບໍດີສາທາລະນະລັດເຊັກ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ໃນ 10 ປີ ຜ່ານມາ ສອງຝ່າຍໄດ້ພົວພັນແລກປ່ຽນກັນໃນຫຼາຍຂົງເຂດ, ໄດ້ຍົກລະດັບການພົວພັນສອງຝ່າຍໃຫ້ເປັນຄູ່ຮ່ວມມືຍຸດທະສາດ, ແລກປ່ຽນທາງດ້ານການຄ້າ-ການລົງທຶນ ມູນຄ່າການສົ່ງອອກຂອງສາທາລະນະລັດເຊັກ ຕໍ່ ສປ ຈີນ ເພີ່ມຂຶ້ນເກືອບສອງເທົ່າ; ຈຳນວນນັກທ່ອງທ່ຽວຈີນເດີນທາງໄປຍັງສາທາລະນະລັດເຊັກ ເພີ່ມຂຶ້ນ 250% ທຽບໃສ່ປີ 2013. ສປ ຈີນ ເອົາໃຈໃສ່ຢ່າງຕັ້ງໜ້າໃນການສືບຕໍ່ພົວພັນກັບສາທາລະນະລັດເຊັກ ເພື່ອສ້າງຄວາມຜາສຸກໃຫ້ປະຊາຊົນສອງຊາດ. ທ່ານ Zemana ກ່າວວ່າ ສາຍພົວພັນຂອງສອງປະເທດນັບມື້ນັບເພີ່ມສູງຂຶ້ນ ໂດຍສະເພາະທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ; ການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການໄປມາຫາສູ່ຂອງປະຊາຊົນສອງຊາດ. ການຄ້າລະຫວ່າງສອງປະເທດໃນປີ 2022, ສາທາລະນະລັດເຊັກ ນຳເຂົ້າສິນຄ້າຈາກ ສປ ຈີນ ມີມູນຄ່າ 4,794 ຕື້ໂດລາ ແລະ ສົ່ງອອກ 3 ຕື້ໂດລາ; ສ່ວນ ສປ ຈີນ ນຳເຂົ້າສິນຄ້າຈາກ ສາທາລະນະລັດເຊັກ ມູນຄ່າ 381 ລ້ານໂດລາ ແລະ ສົ່ງອອກ 1,45 ຕື້ໂດລາ.

ໃນລະຫວ່າງວັນທີ 09-16/01/2023, ທ່ານ Qin Gang, ລັດຖະມົນຕີຕ່າງປະເທດຈີນ ໄດ້ເດີນທາງຢ້ຽມຢາມບັນດາປະເທດອາຟຣິກາ ເຊັ່ນ: ເອທິໂອປີ, ກາບົງ, ອັງໂກລາ, ເບແນັງ, ເອຢິບ, ສຳນັກງານໃຫຍ່ສະຫະພັນອາຟຣິກາ ແລະ ສຳນັກງານໃຫຍ່ສະຫະພັນອາຣັບ. ການຢ້ຽມຢາມຄັ້ງນີ້ເປັນການຢ້ຽມຢາມຕ່າງປະເທດຄັ້ງທຳອິດຂອງທ່ານ Qin Gang ພາຍຫຼັງໄດ້ຮັບຕຳແໜ່ງໃນທ້າຍເດືອນ ທັນວາ 2022 ຜ່ານມາ ເພື່ອສືບຕໍ່ການຮ່ວມມືຍຸດທະສາດ ແລະ ຮອບດ້ານ, ໂດຍສະເພາະໃນການຮ່ວມມືໃນກອບໜຶ່ງແລວໜຶ່ງເສັ້ນທາງ (BRI) ຕາມນະໂຍບາຍ 3 ຮູບການຄື: ສົ່ງເສີມມິດຕະພາບ ແລະ ການພົວພັນອັນດີກັບອາຟຣິກາ; ການຮ່ວມມືທາງດ້ານການຄ້າ ແລະ ໃຫ້ການຊ່ວຍເຫຼືອບັນດາປະເທດໃນອາຟຣິກາ. ທະວີບອາຟຣິກາເປັນທະວີບໜຶ່ງທີ່ປະເທດມະຫາອຳນາດໃຫ້ຄວາມສົນໃຈ ໂດຍສະເພາະ ສປ ຈີນ ແລະ ອາເມລິກາ, ຊຶ່ງໃນເດືອນ ທັນວາ 2022 ຜ່ານມາ, ອາເມລິກາ ເປັນເຈົ້າພາບຈັດກອງປະຊຸມກັບບັນດາປະເທດໃນອາຟຣິກາ ທີ່ ນະຄອນຫຼວງວໍຊິງຕັນ, ທ່ານ Joe Biden, ປະທານາທິບໍດີອາເມລິກາ ໄດ້ປະກາດລົງທຶນໃນອາຟຣິກາ 500 ຕື້ໂດລາ ໄລຍະປີ 2023-2025. ໃນໄລຍະ 3 ທົດສະວັດມານີ້, ສປ ຈີນ ເປັນປະເທດໜຶ່ງທີ່ໃຫ້ການຊ່ວຍເຫຼືອ ແລະ ລົງທຶນຢ່າງມະຫາສານຢູ່ທະວີບອາຟຣິກາ, ຊຶ່ງນັກວິເຄາະຈຳນວນໜຶ່ງໄດ້ໃຫ້ທັດສະນະວ່າ ສປ ຈີນ ຍັງຄົງນຳໜ້າອາເມລິກາ ໃນການຮ່ວມມືກັບອາຟຣິກາ.

**3). ພັກກອມມູນິດກູບາ**

ວັນທີ 13/01/2023, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນາງ Meenakashi Lekhi, ລັດຖະມົນຕີຕ່າງປະເທດອິນເດຍ. ທ່ານ Miguel Díaz ໄດ້ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງ ອິນ

ເດຍ ຕະຫຼອດໄລຍະຜ່ານມາ ໂດຍສະເພາະການຊ່ວຍເຫຼືອດ້ານສະບຽງອາຫານ ແລະ ອື່ນໆ. ທ່ານ ນາງ Lekhi ໄດ້ຕີລາຄາສູງຕໍ່ສາຍພົວພັນດ້ານການທູດລະຫວ່າງສອງປະເທດ ຄົບຮອບ 63 ປີ, ເຫັນດີສືບຕໍ່ຮັດ ແໜ້ນສາຍພົວພັນ ແລະ ການຮ່ວມມືສອງຝ່າຍໃນຂົງເຂດຕ່າງໆເປັນຕົ້ນ ການຜະລິດສະບຽງອາຫານ, ອຸດສາຫະກຳຜະລິດຢາປົວພະຍາດ, ພະລັງງານທົດແທນ, ເຕັກໂນໂລຊີຊີວະພາບ, ການແກ້ໄຂບັນຫາສິ່ງແວດລ້ອມ ແລະ ອື່ນໆ.

ວັນທີ 10/12/2022, ທ່ານ Miguel Díaz-Canel Bermúdez ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນຈາກລັດຖະສະພາອາເມລິກາ ນຳໂດຍ ທ່ານ James McGovern, ປະທານຄະນະກຳມະການກົດໝາຍຂອງລັດຖະສະພາອາເມລິກາ. ສອງຝ່າຍໄດ້ຕີລາຄາຄືນການພົວພັນໃນໄລຍະຜ່ານມາ, ຊຶ່ງ ທ່ານ Miguel Díaz ໄດ້ກ່າວວ່າການຮ່ວມມືຂອງສອງຝ່າຍຄວນມີລັກສະນະສ້າງສັນ, ເຄົາລົບເຊິ່ງກັນ ແລະ ກັນໃຫ້ຫຼາຍຂຶ້ນ ແລະ ໄດ້ແຈ້ງໃຫ້ຊາບກ່ຽວກັບຜົນກະທົບຈາກການປິດລ້ອມທາງດ້ານເສດຖະກິດຂອງອາເມຣິກາຕໍ່ກູບາ ໂດຍສະເພາະຕັ້ງແຕ່ສະໄໝລັດຖະບານຂອງປະທານາທິບໍດີ Donald Trump ເປັນຕົ້ນມາ, ແລະ ຮຽກຮ້ອງໃຫ້ ອາເມລິກາ ຍົກເລີກມາດຕະການຂວ້ຳບາດຕໍ່ກູບາ ເພື່ອຊ່ວຍໃຫ້ເສດຖະກິດກູບາ ຂະຫຍາຍຕົວຫຼາຍກວ່າປັດຈຸບັນ.

**2.ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ການເມືອງພາຍໃນຫຼາຍປະເທດ ໃນຂົງເຂດນີ້ ມີຄວາມສັບສົນຜັນຜວນ, ຊຶ່ງສະແດງອອກໃນຫຼາຍເຫດການດັ່ງນີ້:

- **ໄທ:** ວັນທີ 09/01/2023, ທ່ານ ປະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີໄທ ໄດ້ລົງນາມເຂົ້າເປັນສະມາຊິກພັກລວມໄທສ້າງຊາດ ເພື່ອລົງສະໝັກເລືອກຕັ້ງທົ່ວໄປໃນປີນີ້. ທ່ານ ປະຢຸດ ໄດ້ກ່າວວ່າ ເປັນຄັ້ງທຳອິດຂອງຕົນ ໃນການສະໝັກເຂົ້າເປັນສະມາຊິກພັກການເມືອງ, ສັນຍາວ່າ ຈະເຮັດສຸດຄວາມສາມາດເພື່ອພັດທະນາປະເທດຊາດ ໂດຍການຍຶດໝັ້ນໃນຊາດ, ສາດສະໜາ ແລະ ພະມະຫາກະສັດ. ໄດ້ຮຽກຮ້ອງໃຫ້ປະຊາຊົນຮ່ວມແຮງຮ່ວມໃຈກັນໃນການພັດທະນາປະເທດຊາດ ແລະ ເຄົາລົບປະຊາປະໄຕ. ບັນດາພັກການເມືອງ ເລີ່ມມີການເຄື່ອນໄຫວຫາສຽງເລືອກຕັ້ງສະພາຜູ້ແທນລາດຊະດອນ (ສະພາຕ່ຳ) ຈະສິ້ນສຸດລົງ ໃນວັນທີ 23/03/2023 ແລະ ຈະມີການເລືອກຕັ້ງພາຍໃນ 45 ວັນ.

- **ມຽນມາ:** ວັນທີ 01/01/2023, ລັດຖະບານທະຫານມຽນມາ ໄດ້ຕັດສິນຈຳຄຸກ ທ່ານ ນາງ ອອງຊານ ຊູຈີ, ອະດີດທີ່ປຶກສາແຫ່ງລັດ ແລະ ທ່ານ ວິນມິນ, ອະດີດປະທານາທິບໍດີມຽນມາ ຕື່ມອີກ 7 ປີ ໃນ 5 ຂໍ້ຫາການສໍ້ລາດບັງຫຼວງຖານລະເມີດຕໍ່ລະບຽບການເຊົ່າ, ຊື້ ແລະ ປົກປັກຮັກສາເຮືອບິນເຮລິກົບແຕກໍຄືຊັບສິນຂອງລັດ, ຊຶ່ງໄດ້ສ້າງຄວາມເສຍຫາຍຢ່າງມະຫາສານຕໍ່ມຽນມາ. ປັດຈຸບັນ, ໂທດຈຳຄຸກຂອງທັງສອງທ່ານໄດ້ຖືກຕັດສິນທັງໝົດແລ້ວ. ໂທດຈຳຄຸກ ທ່ານ ນາງ ຊູຈີ ມີທັງໝົດ 33 ປີ ຈາກ 19 ຂໍ້ຫາ ແລະ ທ່ານ ວິນມິນ 12 ປີ. ຂະນະທີ່, ລັດຖະບານທະຫານມຽນມາ ໄດ້ຈັດພິທີສວນສະໜາມສະຫຼອງວັນຊາດມຽນມາ ຄົບຮອບ 75 ປີ ໃນວັນທີ 04/01/2023; ມີການສວນສະໜາມຂອງກຳລັງທະຫານ, ວາງສະແດງຍຸດໂທປະກອນທາງການທະຫານ, ຕຳຫຼວດ ແລະ ຂະບວນມະຫາຊົນຕ່າງໆ. ພ້ອມນີ້, ທ່ານ ມິນ ອອງລາຍ, ຜູ້ນຳມຽນມາ ໄດ້ສະແດງຄວາມຂອບໃຈຕໍ່ ສປ ຈີນ, ອິນເດຍ, ໄທ, ລາວ, ບັງກະລາເທດ ແລະ ປະເທດອື່ນໆ ທີ່ໃຫ້ການຊ່ວຍເຫຼືອມຽນມາຕະຫຼອດມາ. ໃນໂອກາດດັ່ງກ່າວ, ໄດ້ປ່ອຍໂຕນັກໂທດປະມານ 7,000 ຄົນ.

- **ສະພາບໃນແຫຼມເກົາຫຼີ**: ໃນກອງປະຊຸມໃຫຍ່ພັກແຮງງານເກົາຫຼີ ໄລຍະທ້າຍປີ 2022 ຜ່ານມາ, ທ່ານ ກິມເຈີງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ກ່າວວ່າ ສ.ເກົາຫຼີ ແມ່ນສັດຕູຢ່າງແທ້ຈິງຂອງ ສປປ ເກົາຫຼີ, ຊຶ່ງມີຄວາມຈຳເປັນທີ່ສຸດໃນການເພີ່ມທະວີທາງດ້ານອາວຸດນິວເຄຼຍ, ການພັດທະນາລູກສອນໄຟຂ້າມທະວີບ (ICBM) ແລະ ການສົ່ງດາວທຽມສອດແນມທາງການທະຫານຂຶ້ນສູ່ອາວະກາດໃຫ້ໄວທີ່ສຸດໃນປີ 2023 ເພື່ອເພີ່ມຄວາມສາມາດທາງການທະຫານຂອງ ສປປ ເກົາຫຼີ ໂດຍໄດ້ພັດທະນາທາງດ້ານອາວຸດ ແລະ ທົດລອງລູກສອນໄຟຫຼາຍຄັ້ງເພື່ອສ້າງອຳນາດຕໍ່ລອງ ແລະ ຮັກສາອຳນາດອະທິປະໄຕຂອງຕົນ. ຂະນະທີ່, ສ.ເກົາຫຼີ ແລະ ອາເມລິກາ ໄດ້ຮ່ວມຊ້ອມຮົບຄັ້ງໃໝ່ ເພື່ອຕອບໂຕ້ ສປປ ເກົາຫຼີ. ໂດຍລວມແລ້ວ, ສະຖານະການໃນແຫຼມເກົາຫຼີ ຍັງຈະສືບຕໍ່ເຄັ່ງຕຶງ ເນື່ອງຈາກຕ່າງຝ່າຍຕ່າງມີແຜນເພີ່ມຄວາມສາມາດທາງທະຫານຂອງຕົນ, ໃນນັ້ນ, ສ.ເກົາຫຼີ ກໍປະກາດເພີ່ມງົບປະມານທາງການທະຫານ 6,8% ປະມານ 331,4 ພັນລ້ານວອນ ( 261 ຕື້ໂດລາ) ໃນ 5 ປີຕໍ່ໜ້າ.

- **ຍີ່ປຸ່ນ:** ໃນໂອກາດທີ່ຍີ່ປຸ່ນ ຈະເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳກຸ່ມ G7 ໃນເດືອນພຶດສະພາ 2023, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຢ້ຽມຢາມ 5 ປະເທດ ສະມາຊິກກຸ່ມ G7 ຄື: ອັງກິດ, ຝຣັ່ງ,

ອີຕາລີ, ການາດາ ແລະ ອາເມລິກາ ລະຫວ່າງວັນທີ 09-13/01/2023 ເພື່ອສົ່ງເສີມການຮ່ວມມືທາງດ້ານຄວາມໝັ້ນຄົງ, ເສດຖະກິດ-ການຄ້າ ແລະ ອື່ນໆ ລະຫວ່າງຍີ່ປຸ່ນ ແລະ ກຸ່ມ G7 ແລະ ໄດ້ແລກປ່ຽນບັນຫາຄວາມຂັດແຍ່ງໃນອູແກຣນ, ບັນຫາທະເລຈີນໃຕ້, ແຫຼມເກົາຫຼີ, ຄວາມໝັ້ນຄົງໃນອາຊີຕາເວັນອອກ ແລະ ບັນຫາຕ່າງໆທີ່ຕິດພັນກັບ ສປ ຈີນ, ລັດເຊຍ ແລະ ສປປ ເກົາຫຼີ. ສຳລັບການຢ້ຽມຢາມອັງກິດ, ສອງຝ່າຍໄດ້ເຊັນ MOU ກ່ຽວກັບການຮ່ວມມືທາງການທະຫານຮ່ວມກັນ (ຄັ້ງທຳອິດ) ໂດຍຈະອະນຸຍາດໃຫ້ສອງຝ່າຍສາມາດເຄື່ອນກຳລັງທະຫານເຂົ້າໄປໃນດິນແດນຂອງກັນ ແລະ ກັນໄດ້, ຄ້າຍຄືກັບຍີ່ປຸ່ນ ເຄີຍປະຕິບັດກັບອີຕາລີ. ການຮ່ວມມືທາງການທະຫານໃນຄັ້ງນີ້ ເປັນໜຶ່ງໃນແຜນການຮ່ວມມື ແລະ ຍົກລະດັບຄວາມໝັ້ນຄົງຂອງຍີ່ປຸ່ນ ທີ່ສອດຄ່ອງກັບແຜນຍຸດທະສາດໃໝ່ ທີ່ຍີ່ປຸ່ນ ເພີ່ມງົບປະມານທາງການທະຫານຂຶ້ນເປັນ 2% ຂອງ GDP ໃນໄລຍະ 5 ປີຕໍ່ໜ້າ. ສ່ວນການຢ້ຽມຢາມອາເມລິກາ, ສອງຝ່າຍໄດ້ອອກຖະແຫຼງການຮ່ວມກັນ ເພື່ອຢໍ້າຄືນຕໍ່ນະໂຍບາຍອິນໂດ-ປາຊີຟິກ.

- **ຊ່ອງແຄບໄຕ້ຫວັນ:** ສະພາບການໃນໄຕຫວັນ ມີຄວາມເຄັ່ງຕຶງຂຶ້ນ ພາຍຫຼັງ ອາເມລິກາ ໄດ້ສົ່ງເຮືອໂຈມຕີ USS Chung-Hoon ໃນວັນທີ 09/01/2023 ຜ່ານຊ່ອງແຄບໄຕຫວັນ ແລະ ການຢ້ຽມຢາມເກາະໄຕຫວັນຂອງສະມາຊິກລັດຖະສະພາເຢຍລະມັນ ແລະ ລິດຕົວນີ. ເຮັດໃຫ້ ກອງທັບປົດປ່ອຍປະຊາຊົນຈີນ (PLA) ໄດ້ຊ້ອມຮົບທາງບົກ ແລະ ທາງນໍ້າ ຄັ້ງໃໝ່ອ້ອມຮອບເກາະໄຕຫວັນ ເພື່ອກະກຽມຄວາມພ້ອມຕອບໂຕ້ການແຊກແຊງ ແລະ ຄຸກຄາມຈາກພາຍນອກ ທີ່ມີຈຸດປະສົງແບ່ງແຍກເກາະໄຕຫວັນອອກຈາກ ສປ ຈີນ. ສ່ວນ ອາເມລິກາ ກຽມຈັດຕັ້ງໜ່ວຍຕອບໂຕ້ໄວທາງທະເລຢູ່ດອນກວມ ແລະ ດອນໂອກີນາວາຂອງຍີ່ປຸ່ນ. ຂະນະທີ່ ທ່ານ William Lai, ຮອງຫົວໜ້າພັກປະຊາທິປະໄຕກ້າວໜ້າ (DPP), ຊຶ່ງເປັນພັກກຳອຳນາດ ໃນໄຕຫວັນ ໄດ້ຖືກເລືອກໃຫ້ເປັນຫົວໜ້າພັກຄົນໃໝ່ ແທນທ່ານ ນາງ Tsai Ing-wen, ຜູ້ນຳໄຕຫວັນ ທີ່ລາອອກຈາກຫົວໜ້າພັກ ພາຍຫຼັງຝ່າຍແພ້ການເລືອກຕັ້ງທ້ອງຖິ່ນ ໃນເດືອນພະຈິກ 2022 ແລະ ຄາດວ່າ ທ່ານ William Lai ຈະລົງສະໝັກເລືອກຕັ້ງຜູ້ນຳໄຕຫວັນ ທີ່ຈະເລືອກຕັ້ງໃນປີ 2024.

- **ນູແວນເຊລັງ:** ວັນທີ 19/01/2023, ທ່ານ ນາງ Jacinda Adern, ນາຍົກລັດຖະມົນຕີນູແວນເຊລັງ ໄດ້ປະກາດລາອອກຈາກຕຳແໜ່ງ, ຊຶ່ງທ່ານດຳລົງຕຳແໜ່ງນັບຕັ້ງແຕ່ປີ 2017 ເປັນຕົ້ນມາ ຕອນອາຍຸພຽງ 37 ປີ. ທ່ານ ນາງ Adern ຈະສິ້ນສຸດການປະຕິບັດໜ້າທີ່ ໃນວັນທີ 07/02/2023 ແລະ ໄດ້ຮຽກຮ້ອງໃຫ້ຈັດການເລືອກຕັ້ງທົ່ວໄປໃນວັນທີ 14/10/2023 ພ້ອມທັງສະແດງຄວາມເຊື່ອໝັ້ນວ່າພັກແຮງງານນູແວນເຊລັງ ຈະໄດ້ຮັບໄຊຊະນະໃນການເລືອກຕັ້ງດັ່ງກ່າວ. ການລາອອກຂອງ ທ່ານ ນາງ Adern ຍ້ອນບໍ່ໄດ້ຮັບການສະໜັບສະໜູນຈາກສະມາຊິກພາຍໃນພັກ ແລະ ຄວາມສາມາດໃນການນຳພາປະເທດ ໂດຍສະເພາະແມ່ນການແກ້ໄຂບັນຫາຜົນກະທົບຈາກໂຄວິດ-19, ໄພເງິນເຟີ້, ການຂະຫຍາຍຕົວດ້ານເສດຖະກິດຫຼຸດລົງ ແລະ ອື່ນໆ. ຫຼັງຈາກນັ້ນ, ທ່ານ Chris Hipkins, ໄດ້ຖືກເລືອກເປັນຫົວໜ້າພັກແຮງງານນູແວນເຊລັງ ໃນວັນທີ 22/01/2023 ແລະ ເຂົ້າສາບານຕົນເປັນນາຍົກລັດຖະມົນຕີຄົນທີ 41 ຂອງນູແວນເຊລັງ ໃນວັນທີ 25/01/2023, ຊຶ່ງທ່ານ Hipkins ໄດ້ມີຄຳເຫັນວ່າ ການແກ້ໄຂບັນຫາຄ່າຄອງຊີບ ຈະເປັນບຸລິມະສິດຫຼັກ ໃນນະໂຍບາຍຂອງຕົນ. ພ້ອມກັນນັ້ນ,ກໍໄດ້ເລືອກທ່ານ ນາງ Carmel Sepulani ເປັນຮອງປະທານພັກແຮງງານ ແລະ ຮອງນາຍົກລັດຖະມົນຕີ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

- ຄວາມເຄັ່ງຕຶງໃນອູແກຣນ ໄດ້ເພີ່ມທະວີຂຶ້ນ ໂດຍສະເພາະແມ່ນການໂຈມຕີທາງອາກາດໃນພາກພື້ນ Donbass ທາງພາກຕາເວັນອອກຂອງອູແກຣນ, ຊຶ່ງວັນທີ 02/01/2023, ອູແກຣນ ໄດ້ໂຈມຕີດ້ວຍລູກສອນໄຟໃສ່ເຂດທີ່ພັກອາໄສຊົ່ວຄາວຂອງກອງທັບລັດເຊຍ ຢູ່ເມືອງ Donetsk ເຮັດໃຫ້ມີຜູ້ເສຍຊີວິດ 63 ຄົນ. ລັດເຊຍ ໄດ້ຕອບໂຕ້ຄືນໂດຍນຳໃຊ້ Drones ໂຈມຕີເຂດຍຸດທະສາດ ແລະ ໂຄງລ່າງພື້ນຖານດ້ານການທະຫານຂອງອູແກຣນເຮັດໃຫ້ໄດ້ຮັບຄວາມເສຍຫາຍຫຼາຍສົມຄວນ, ທະຫານອູແກຣນ ເສຍຊີວິດຫຼາຍກວ່າ 600 ຄົນ. ຂະນະທີ່, ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງພາຍໃນຂອງອູແກຣນ ເສຍຊີວິດຈາກເຫດການຍົນເຮລິກົບແຕຕົກໃນຂະນະທີ່ເດີນທາງໄປເຂດແນວໜ້າທີ່ມີການປະທະກັນລະຫວ່າງ ອູແກຣນ-ລັດເຊຍ ໃນວັນທີ 18/01/2023 ຜ່ານມາ. ນອກນັ້ນ, ລັດເຊຍສາມາດຍຶດຄອງເມືອງ Soledar ເມືອງຍຸດທະສາດສຳຄັນ, ເມືອງບໍ່ເກືອຂອງ ອູແກຣນ ໃນຂົງເຂດ Donbass ໄດ້ເຮັດໃຫ້ການຊ່ວຍເຫຼືອ, ການສະໜອງອາວຸດ ແລະ ອື່ນໆ ຂອງຕາເວັນຕົກໄປຍັງອູແກຣນ ພົບບັນຫາຫຍຸ້ງຍາກ. ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ໃຫ້ຄວາມສຳຄັນຕໍ່ກອງທັບລັດເຊຍທີ່ສາມາດບຸກຍຶດພື້ນທີ່ສຳຄັນໃນອູແກຣນ ຢ່າງຕໍ່ເນື່ອງ; ກອງທັບລັດເຊຍ ມີແຜນເພີ່ມຈຳນວນທະຫານ ຈາກ 1.150.000 ຄົນ ເປັນ 1.500.000 ຄົນ

ໃນ ອະນາຄົດ ແລະ ຈະດັດປັບເກນອາຍຸທະຫານພັນທະຈາກ 18-27 ປີ ເປັນ 21-30 ປີ ແລະ ໄດ້ແລກປ່ຽນຊະເລີຍເສິກນຳອູແກຣນ, ໃນນັ້ນ ມີທະຫານລັດເຊຍ 82 ຄົນ ແລະ ທະຫານ ອູແກຣນ 140 ຄົນ ເປັນການແລກປ່ຽນຊະເລີຍເສິກ ຄັ້ງທີ 3 ລະຫວ່າງສອງຝ່າຍ ນັບຕັ້ງແຕ່ເກີດຂໍ້ຂັດແຍ່ງໃນເດືອນກຸມພາ 2022 ເປັນຕົ້ນມາ.

ລັດເຊຍ ແລະ ເບລາຣຸດຊີ ໄດ້ຮ່ວມກັນຝຶກຊ້ອມທາງການທະຫານເປັນເວລາສອງອາທິດ ຢູ່ໃກ້ກັບຊາຍແດນຂອງເບລາຣຸດຊີ ເພື່ອຕອບໂຕ້ການເພີ່ມຈຳນວນຂອງກອງກຳລັງນາໂຕ້, ຊຶ່ງປະກອບດ້ວຍທະຫານເບລາຣຸດຊີ 70.000 ຄົນ ແລະ ທະຫານລັດເຊຍ 9.000 ຄົນ.

ບັນດາປະເທດຕາເວັນຕົກ ສືບຕໍ່ຂວ້ຳບາດລັດເຊຍ ແລະ ໃຫ້ການຊ່ວຍເຫຼືອອູແກຣນ, ຊຶ່ງ ແຟັງລັງ ໄດ້ອາຍັດຊັບສິນຂອງລັດເຊຍ ປະມານ 203 ລ້ານໂດລາສະຫະລັດ. ຂະນະທີ່ ກອງປະຊຸມຂອງບັນດາປະເທດພັນທະມິດອູແກຣນ ປະມານ 50 ປະເທດ ຢູ່ຖານທັບ Remstein ຂອງອາເມລິກາ ທີ່ຕັ້ງຢູ່ເຢຍລະມັນ ໄດ້ປະກາດຊ່ວຍເຫຼືອທາງທະຫານແກ່ອູແກຣນ ເພີ່ມຕື່ມ 540 ລ້ານເອີໂຣ, ອັງກິດ ຈະຊ່ວຍເຫຼືອລົດຕັງ ລຸ່ນ Challenger 2 ຈຳນວນ 14 ຄັນ, ລົດຫຸ້ມເກາະຫຼາຍຮ້ອຍຄັນ ແລະ ລູກສອນໄຟປ້ອງກັນທາງອາກາດ; ເຢຍລະມັນ ຈະສົ່ງລົດຕັງ ລຸ້ນ Leoperd2 ຈຳນວນ 14 ຄັນ ພ້ອມທັງອະນຸຍາດໃຫ້ປະເທດທີ່ຊື້ລົດຕັງລຸ່ນດັ່ງກ່າວ ຈາກເຢຍລະມັນ ສາມາດນຳສົ່ງຕໍ່ ໄປຊ່ວຍອູແກຣນໄດ້. ອາເມລິກາ ປະກາດຊ່ວຍເຫຼືອອູແກຣນຕື່ມ 2,5 ຕື້ໂດລາສະຫະລັດ, ໃນນັ້ນລວມມີ ລົດຫຸ້ມເກາະ 50 ຄັນ, ລົດຕັງທີ່ຜະລິດເອງ ລຸ່ນ M1 Brams ຈຳນວນ 31 ຄັນ, ແຕ່ການຈັດສົ່ງ ແລະ ການຝຶກການນຳໃຊ້ໃຫ້ແກ່ທະຫານອູແກຣນອາດໃຊ້ເວລາຫຼາຍເດືອນ.

ລັດເຊຍ ໄດ້ປະກາດຂັບໄລ່ ເອກອັກຄະລັດຖະທູດແອັດສະໂຕນີ ປະຈຳລັດເຊຍ ອອກຈາກລັດເຊຍ ພາຍໃນວັນທີ 7 ກຸມພາ 2023 ພາຍຫຼັງທີ່ຜູ້ກ່ຽວ ໄດ້ປະກາດຊ່ວຍເຫຼືອທາງທະຫານໃຫ້ອູແກຣນ 113 ລ້ານເອີໂຣ ແລະ ແອັດສະໂຕນີ ກໍຕອບໂຕ້ທາງການທູດລັກສະນະດຽວກັນ. ສ່ວນ ລັດເວຍ ກໍປະກາດຂັບໄລ່ ທ່ານທູດລັດເຊຍ ອອກຈາກປະເທດ ຕາມຮອຍແອັດສະໂຕນີ ເຖິງແມ່ນວ່າ ສອງປະເທດດັ່ງກ່າວ ລ້ວນແຕ່ເປັນປະເທດອະດີດສະຫະພາບໂຊວຽດ.

- **ສະພາບການໃນຂົງເຂດອາເມລິກາລາຕິນ**: ວັນທີ 09/01/2023, ທ່ານ Luiz Inacio Lula da Silva, ປະທານາທິບໍດີບຣາຊິນ ໄດ້ປະກາດຍົກລະດັບການປ້ອງກັນຄວາມໝັ້ນຄົງ ຢູ່ ນະຄອນຫຼວງ Brazilia ໄປຈົນເຖິງວັນທີ 31/01/2023 ພາຍຫຼັງຜູ້ສະໜັບສະໜູນ ທ່ານ Jair Bolsonaro, ຜູ້ນຳພັກຝ່າຍຂວາ, ອະດີດປະທານາທິບໍດີບຣາຊິນ ໄດ້ໂຮມຊຸມນຸມປະທ້ວງ ແລະ ສ້າງຄວາມບໍ່ສະຫງົບໂດຍການບຸກເຂົ້າໄປທຳລາຍຊັບສິນຢູ່ ທຳນຽບປະທານາທິບໍດີ, ລັດຖະສະພາ, ສານ ແລະ ສະຖານທີ່ທາງການຕ່າງໆ. ການປະທ້ວງໄດ້ແຜ່ລາມເປັນວົງກວ້າງ ແລະ ສ້າງຄວາມເສຍຫາຍເປັນຈຳນວນຫຼາຍເຮັດໃຫ້ເຈົ້າໜ້າທີ່ຕ້ອງໄດ້ນຳໃຊ້ລູກປືນຢາງ ແລະ ແກ໊ສນ້ຳຕາ ເພື່ອຫຼຸດລະດັບສະຖານະການທີ່ເກີດຂຶ້ນ. ປັດຈຸບັນ, ມີຜູ້ຖືກຈັບກຸມແລ້ວຫຼາຍກວ່າ 1.500 ຄົນ. ທ່ານ Luiz Inacio Lula da Silva ໄດ້ກ່າວວ່າ ບຸກຄົນໃດກໍຕາມທີ່ພົວພັນກັບເຫດການສ້າງຄວາມບໍ່ສະຫງົບໃນຄັ້ງນີ້ຈະໄດ້ຮັບໂທດຕາມກົດໝາຍ. ຂະນະທີ່, ທ່ານ Jair Bolsonaro ອະດີດປະທານາທິບໍດີບຣາຊິນ ໄດ້ປະຕິເສດຄວາມຮັບຜິດຊອບໃດໆຕໍ່ເຫດການດັ່ງກ່າວ. ພ້ອມດຽວກັນ, ສານສູງສຸດຂອງບຣາຊິນ ໄດ້ປະກາດໂຈະການປະຕິບັດໜ້າທີ່ຂອງເຈົ້າຄອງນະຄອນຫຼວງ Brazilia ເປັນເວລາ 90 ວັນ ເນື່ອງຈາກພົວພັນກັບ ເຫດຄວາມບໍ່ສະຫງົບໃນຄັ້ງນີ້. ຜູ້ນຳຫຼາຍປະເທດ ລວມທັງ ກູບາ, ຈີນ, ອາເມລິກາ, ຝຣັ່ງ ໄດ້ກ່າວປະນາມຕໍ່ການສ້າງຄວາມບໍ່ສະຫງົບໃນຄັ້ງນີ້ ແລະ ສະແດງການສະໜັບສະໜູນລັດຖະບານຂອງ ທ່ານ Lula; ຢູ່ ເວເນຊູເອລາ, ປະຊາຊົນກໍໄດ້ປະທ້ວງ ຍ້ອນການເພີ່ມຂຶ້ນຂອງອັດຕາເງິນເຟີ້ທີ່ເພີ່ມຂຶ້ນເກືອບ 300% ໃນປີ 2022; ຢູ່ເປຣູ ກໍມີການປະທ້ວງຢ່າງຮຸນແຮງ ເຮັດໃຫ້ມີຜູ້ເສຍຊີວິດ 54 ຄົນ ແລະ ບາດເຈັບຫຼາຍກວ່າ 1.100 ຄົນ ເຮັດໃຫ້ໃນວັນທີ 16/01/2023, ທ່ານ ນາງ Dina Boluarte, ປະທານາທິບໍດີເປຣູ ຈຳເປັນຕ້ອງຂະຫຍາຍໄລຍະເວລາມາດຕະການສຸກເສີນອອກໄປຕື່ມອີກ 30 ວັນ ຕໍ່ຈາກເດືອນທັນວາ 2022 ຜ່ານມາ. ສະເພາະສະພາບການໃນເປຣູ ໄດ້ເກີດຄວາມວຸ້ນວາຍນັບຕັ້ງແຕ່ ທ່ານ Pedro Castillo, ອະດີດປະທານາທິບໍດີເປຣູ ຖືກສະພາສູງປົດອອກຈາກຕຳແໜ່ງ ພ້ອມທັງດຳເນີນຄະດີກັບຜູ້ກ່ຽວຫຼາຍຂໍ້ຫາໃນການສໍ້ລາດບັງຫຼວງ, ການລະເມີດລັດຖະທຳມະນູນ ແລະ ຂໍ້ຫາອື່ນໆ ແລະ ໄດ້ປະກາດແຕ່ງຕັ້ງ ທ່ານ ນາງ Boluarte, ຮອງປະທານາທິບໍດີຂຶ້ນເປັນປະທານາທິບໍດີເປຣູແທນ.

-**ອາເມລິກາ**: ພາຍຫຼັງພັກຣີພັບລີກັນ ສາມາດຍາດໄດ້ສຽງສະໜັບສະໜູນສ່ວນໃຫຍ່ໃນສະພາຕ່ຳດ້ວຍຄະແນນ 222 ສຽງ, ສ່ວນພັກເດໂມແຄັດ ໄດ້ 213 ສຽງ ໃນການເລືອກຕັ້ງກາງສະໄໝໃນເດືອນພະຈິກ 2022 ຜ່ານມາ. ພັກຣີພັບລີກັນ ພະຍາຍາມເລືອກປະທານສະພາຕ່ຳ ເຖິງ 15 ຄັ້ງ ຈຶ່ງສາມາດເລືອກໄດ້ທ່ານ Kevin McCarthy, ສະມາຊິກພັກຣີພັບລີກັນ ປ່ຽນແທນ ທ່ານ ນາງ ແນນຊີ ເປໂລຊີ, ຈາກພັກດີໂມແຄັດ.

ວັນທີ 08/01/2023, ທ່ານ Joe Biden, ປະທານາທິບໍດີອາເມລິກາ ໄດ້ເດີນທາງຢ້ຽມຢາມແມັກຊິໂກ ເພື່ອເຂົ້າຮ່ວມກອງປະຊຸມສາມຝ່າຍລະຫວ່າງອາເມລິກາ, ແມັກຊິໂກ ແລະ ການາດາ. ທ່ານ Biden ໄດ້ລົງເຄື່ອນໄຫວເຂດຊາຍແດນລະຫວ່າງອາເມລິກາ-ແມັກຊິກໂກ ເພື່ອກວດກາບັນຫາຜູ້ອົບພະຍົບ. ສໍາລັບກອງປະຊຸມສາມຝ່າຍໄດ້ປຶກສາຫາລືກ່ຽວກັບການແກ້ໄຂບັນຫາຜູ້ອົບພະຍົບ, ການປ່ຽນແປງທາງດ້ານດິນຟ້າອາກາດ, ບັນຫາຢາເສບຕິດ ແລະ ອື່ນໆ. ການຢ້ຽມຢາມແມັກຊິກໂກໃນຮອບ 10 ປີ ຂອງປະທານາທິບໍດີອາເມລິກາໃນຄັ້ງນີ້, ຈະຊ່ວຍໃຫ້ບັນຫາຄວາມຂັດແຍ່ງການຍຶດຄອງຕະຫຼາດພະລັງງານລະຫວ່າງອາເມລິກາ-ແມັກຊິກ ຜ່ອນຄາຍລົງ. ພ້ອມດຽວກັນ, ກໍເປັນໂອກາດໃຫ້ແມັກຊິກໂກຕໍ່ກັບບັນຫາຜູ້ອົບພະຍົບໃຫ້ໄດ້ຮັບການແກ້ໄຂ ໂດຍສອດຄ່ອງກັບນະໂຍບາຍຂອງ ທ່ານ Biden ທີ່ປະກາດຮັບເອົາຜູ້ອົບພະຍົບຈາກນິກາລາກົວ, ກູບາ, ເຮຕິ ແລະ ເວເນຊຸເອລາ ປະມານ 30.000 ຄົນ/ເດືອນ. ແຕ່ການຈັດຕັ້ງປະຕິບັດຕົວຈິງໃນປີ 2022 ໄດ້ພຽງ 25.400 ຄົນ. ຂະນະທີ່, ກໍານົດແມ່ນ 125,000 ຄົນ ໜ້ອຍກວ່າສະໄໝປະທານາທິບໍດີ Trump ທີ່ຮັບ 84,500 ຄົນ ໃນປີ 2016.

**- ເຢຍລະມັນ**: ວັນທີ 16/01/2023, ທ່ານ ນາງ Christine Lambrecht, ລັດຖະມົນຕີກະຊວງປ້ອງກັນປະເທດເຢຍລະມັນ ໄດ້ປະກາດລາອອກຈາກຕໍາແໜ່ງ ແລະ ໄດ້ກ່າວວ່າບໍ່ສາມາດຮັບມືກັບແຮງກົດດັນຈາກຝ່າຍຕ່າງໆ, ປະຊາຊົນຈໍານວນໜຶ່ງບໍ່ພໍໃຈຕໍ່ກັບຄໍາເວົ້າຂອງທ່ານທີ່ວ່າ ຂໍ້ຂັດແຍ່ງອູແກຣນ-ລັດເຊຍ ເຮັດໃຫ້ຕົນເອງມີຄວາມປະທັບໃຈ, ມີໂອກາດໄດ້ພົບປະກັບຜູ້ນໍາຫຼາຍປະເທດ. ນັກວິເຄາະໄດ້ໃຫ້ທັດສະນະວ່າຍ້ອນ ທ່ານ ນາງ Lambrecht ບໍ່ມີຄວາມຊໍານານທາງດ້ານວຽກງານປ້ອງກັນປະເທດ ໄດ້ເຮັດໃຫ້ກອງທັບເຢຍລະມັນອ່ອນແອລົງ ແລະ ໃນໄລຍະຜ່ານມາທ່ານເອງບໍ່ເຫັນດີຕໍ່ນະໂຍບາຍຊ່ວຍເຫຼືອອູແກຣນຕ້ານກັບລັດເຊຍ. ພາຍຫຼັງ ທ່ານ ນາງ Lambrecht ລາອອກຈາກຕໍາແໜ່ງ, ນາຍົກລັດຖະມົນຕີເຢຍລະມັນໄດ້ແຕ່ງຕັ້ງ ທ່ານ Boris Pistorius, ເປັນລັດຖະມົນຕີປ້ອງກັນປະເທດຄົນໃໝ່.

**- ຝຣັ່ງ**: ວັນທີ 20/01/2023, ປະຊາຊົນຝຣັ່ງ ຫຼາຍກວ່າ 2 ລ້ານຄົນ ໄດ້ໂຮມຊຸມນຸມປະທ້ວງຄັດຄ້ານແຜນປະຕິຮູບລະບົບບໍານານຂອງລັດຖະບານຝຣັ່ງ ຊຶ່ງຜູ້ປະທ້ວງເຫັນວ່າ ການປະຕິຮູບດັ່ງກ່າວ ເປັນການເອື້ອຜົນປະໂຫຍດໃຫ້ແກ່ນາຍຈ້າງ, ນັກທຸລະກິດ ແລະ ກຸ່ມຄົນຮັ່ງມີ, ຂະນະທີ່ ປະຊາຊົນໄດ້ຮັບຜົນກະທົບ. ເຈົ້າໜ້າທີ່ ໄດ້ຈັບກຸມ 50 ຄົນ ທີ່ກໍ່ຈະລາຈົນ ແລະ ຄອບຄອງອາວຸດ ທີ່ຜິດກົດໝາຍ.

**3). ກອງປະຊຸມປະຈໍາປີ ເວທີປາໄສເສດຖະກິດໂລກ (World Economic Forum 2023)**

ວັນທີ 16-20/01/2023, ປະເທດສະວິດ ໄດ້ເປັນເຈົ້າພາບຈັດກອງປະຊຸມປະຈໍາປີ ເວທີປາໄສເສດຖະກິດໂລກ ທີ່ເມືອງ ດາວັອສ, ໂດຍມີຜູ້ແທນຈາກ 91 ປະເທດເຂົ້າຮ່ວມ. ກອງປະຊຸມ ໄດ້ຮຽກຮ້ອງໃຫ້ຜູ້ນໍາທຸກປະເທດ ຮ່ວມກັນແກ້ໄຂສະພາບການຂອງໂລກຢ່າງເປັນເຈົ້າການ ເປັນຕົ້ນແມ່ນ ການຮ່ວມມືແກ້ໄຂເສດຖະກິດ ພາຍຫຼັງຜົນກະທົບຈາກການແຜ່ລະບາດຂອງພະຍາດ ໂຄວິດ-19, ບັນຫາເງິນເຟີ້, ຄວາມຂັດແຍ່ງອູແກຣນ-ລັດເຊຍ, ບັນຫາສະພາບອາກາດ ແລະ ອື່ນໆ ທີ່ເຄັ່ງຮ້ອນ ໃຫ້ທັນການ. ນອກນັ້ນ, ໂປໂລຍ ຍັງໄດ້ໃຊ້ເວທີດັ່ງກ່າວ ຮຽກຮ້ອງໃຫ້ ເຢຍລະມັນສົ່ງລົດຖັງ ໄປຊ່ວຍອູແກຣນ.

**4). ກອງປະຊຸມສຸດຍອດປະຊາຄົມປະເທດ ໃນອາເມລິກາລາຕິນ ແລະ ກາລິບຽນ (CELAC) ຄັ້ງທີ 7**

ວັນທີ 24/01/2023, ບັນດາຜູ້ນໍາປະເທດອາເມລິກາລາຕິນ ແລະ ກາລິບຽນ 33 ປະເທດ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດປະຊາຄົມປະເທດອາເມລິກາ ແລະ ກາລິບຽນ (CELAC) ຄັ້ງທີ 7 ທີ່ ນະຄອນຫຼວງ Buenos Aires, ປະເທດອາກຊັງຕິນ. ຈຸດປະສົງຂອງກອງປະຊຸມແມ່ນເພື່ອເຮັດໃຫ້ອາເມລິກາລາຕິນ-ກາລິບຽນ ເປັນເວທີໃນການເພີ່ມທະວີການພົວພັນກັບບັນດາປະເທດ ແລະ ພາກພື້ນ ເປັນຕົ້ນກັບ ສປ ຈີນ, ສະຫະພາບເອີຣົບ, ສະຫະພາບອາຟຣິກາ ແລະ ອາຊຽນ.

ກອງປະຊຸມໃຫ້ປຶກສາຫາລືກ່ຽວກັບບັນຫາສັນຕິພາບໃນພາກພື້ນ, ການຕໍ່ຕ້ານກຸ່ມນິຍົມປະຊາທິປະໄຕຫົວຮຸນແຮງ ແລະ ຄວາມຮຸນແຮງທາງການເມືອງ, ຮ່ວມກັນແກ້ໄຂໄພອຶດຫິວ ແລະ ຄວາມທຸກຍາກ, ການສຶກສາ, ສາທາລະນະສຸກ, ການພັດທະນາແບບຍືນຍົງ, ການປ່ຽນແປງຂອງດິນຟ້າອາກາດ ແລະ ບັນຫາອື່ນໆ. ນອກນີ້, ທ່ານ Luiz Inacio Lula da Silva, ປະທານາທິບໍດີບຣາຊິນ, ຜູ້ນໍາພັກຝ່າຍຊ້າຍ ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ, ພາຍຫຼັງບຣາຊິນບໍ່ໄດ້ເຂົ້າຮ່ວມກອງປະຊຸມໃນສອງປີຜ່ານມາໃນສະໄໝ ທ່ານ Jair Bolsonaro, ຜູ້ນໍາພັກຝ່າຍຂວາ, ອະດີດປະທານາທິບໍດີບຣາຊິນ, ທີ່ນິຍົມຕາເວັນຕົກ. ການປະຕິເສດບໍ່ເຂົ້າຮ່ວມກອງປະຊຸມເວທີປາໄສເສດຖະກິດໂລກຂອງ ທ່ານ Lula, ແຕ່ໄປເຂົ້າຮ່ວມກອງປະຊຸມ CELAC ສະແດງໃຫ້ເຫັນວ່າບຣາຊິນ ໄດ້ເລີ່ມກັບສູ່ພັນທະມິດຕາເວັນອອກທີ່ມີການພົວພັນມາແຕ່ດົນນານ, ເລີ່ມຫັນຫຼັງການພົວພັນກັບອາເມລິກາ. ນອກນີ້, ຜູ້ນໍາໂບລິວີ, ໂກລົມບີ, ເປຣູ ກໍເຂົ້າຮ່ວມ. ສໍາລັບ ສປ ຈີນ ເຖິງຈະບໍ່ໄດ້ເຂົ້າຮ່ວມ, ແຕ່ໄດ້ສົ່ງວີດີໂອອວຍພອນກອງປະຊຸມດັ່ງກ່າວຄືຫຼາຍຄັ້ງ

ຜ່ານມາ, ຊຶ່ງ ມີເນື້ອໃນວ່າ ປະເທດອາເມລິກາລາຕິນ ແລະ ກາລິບຽນ ແມ່ນບັນດາປະເທດກຳລັງພັດທະນາ, ໄດ້ປະກອບສ່ວນຢ່າງຕັ້ງໜ້າ ໃນການຊຸກຍູ້ການຮ່ວມມືໃນພາກພື້ນ ແລະ ສາກົນ; ສປ ຈີນ ຖືສຳຄັນ ແລະ ຈະເພີ່ມການຮ່ວມມືກັບ ອາເມລິກາລາຕິນ ແລະ ກາລິບຽນ ຢ່າງບໍ່ຢຸດຢັ້ງ ເພື່ອພ້ອມກັນຜ່ານຜ່າ ສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກນານາປະການ.

**5). ສະພາບການ ໃນຂົງເຂດຕາເວັນອອກກາງ**

- ປະຊາຊົນອິດສະລາແອນຫຼາຍພັນຄົນ ໄດ້ໂຮມຊຸມນຸມປະທ້ວງ ຢູ່ ນະຄອນຫຼວງ Tel Aviv ຕິດຕໍ່ກັນ ຕັ້ງແຕ່ຕົ້ນເດືອນ ມັງກອນ 2023 ເປັນຕົ້ນມາ, ຕໍ່ຕ້ານນະໂຍບາຍໃໝ່ຂອງ ທ່ານ Benjamin Netanyahu, ນາຍົກລັດຖະມົນຕີອິດສະລາແອນ ທີ່ກະກຽມປະຕິຮູບລະບົບຕຸລາການ; ຮຽກຮ້ອງໃຫ້ຢຸດຕິຂໍ້ຂັດແຍ່ງລະຫວ່າງອິດສະລາແອນ ກັບບັນດາປະເທດອາຣັບ; ຂັດຄ້ານໂຄງການນິວເຄຼຍອີຣານ ແລະ ການຍົກລະດັບອຳນາດທາງການທະຫານ. ການປະທ້ວງດັ່ງກ່າວ ເປັນຄັ້ງທຳອິດນັບຕັ້ງແຕ່ ທ່ານ Benjamin Netanyahu ເຂົ້າຮັບຕຳແໜ່ງນາຍົກລັດຖະມົນຕີອິດສະລາແອນໃນເດືອນທັນວາ ປີ 2022 ເປັນຕົ້ນມາ.

- ປະຊາຊົນ ໃນອີຣັກ, ຕວັກກີ, ເຢເມນ ແລະ ຈໍແດນ ໄດ້ພາກັນປະທ້ວງຢູ່ໜ້າສະຖານທູດຊູແອັດ ປະຈຳປະເທດຕົນ ເພື່ອປະທ້ວງຕໍ່ເຫດການ ທີ່ມີຄົນຈູດ ຄຳພີ Qur’an ຂອງສາສະໜາອິດສະລາມ. ໃນນັ້ນ, ປະທານາທິບໍດີຕວັກກີ ໄດ້ປະນາມຮຸນແຮງຕໍ່ເຫດການດັ່ງກ່າວ ແລະ ຢ້ຳຄືນວ່າ ຕວັກກີ ຍັງບໍ່ພ້ອມທີ່ຈະສະໜັບສະໜູນ ຊູແອັດ ເຂົ້າເປັນສະມາຊິກ NATO ເທື່ອ, ໃນໄລຍະຜ່ານມາ ຊູແອັດ ກໍບໍ່ໄດ້ສົ່ງຕົວກຸ່ມຕິດອາວຸດຊາວເຄີດ 130 ຄົນ ໃຫ້ ຕວັກກີຕາມການຮຽກຮ້ອງຂອງຕວັກກີ ແຕ່ຢ່າງໃດ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຄຕພ ຈັດປາຖະກະຖາເຊື່ອມຊຶມເອກະສານສຳຄັນ ຂອງພັກ-ຂອງຊາດ




ວັນທີ 17 ມັງກອນ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດປາຖະກະຖາເຊື່ອມຊຶມເອກະສານສຳຄັນຂອງພັກ-ຂອງຊາດຄື: ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20 ມັງກອນ 1949- 20 ມັງກອນ 2023); ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ XI ແລະ ມະຕິກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດຄັ້ງທີ V, ໂດຍການເປັນກຽດເຜີຍແຜ່ຂອງສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ສະມາຊິກພັກ, ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ 132 ສະຫາຍ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ທອນຄືນມູນເຊື້ອ, ການເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານວິລະກຳ ອັນພິລະອາດຫານຂອງກອງທັບປະຊາຊົນລາວ ຕະຫຼອດໄລຍະ 74 ປີ ຜ່ານມາ ພາຍໃຕ້ການຊີ້ນຳຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດຕໍ່ສູ້ກູ້ຊາດ ສາມາດຍາດໄດ້ໄຊຊະນະຢ່າງເບື້ອງນິດລຽນຕິດ ສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ແລະ ສືບຕໍ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດດັ່ງຄຳຂວັນ "ກອງທັບຂອງຊາດລາວ ວິລະຊົນ, ຄົນລາວຜິລະອາດຫານ. ສະຫາຍ ຫົວໜ້າ ຄຕພ ຍັງຍົກໃຫ້ເຫັນເນື້ອໃນສຳຄັນຂອງມະຕິ 5 ສະໄໝທີ XI ເປັນຕົ້ນແມ່ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບ 2 ວາລະແຫ່ງຊາດ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດໃນ 1 ປີ ທີ່ຜ່ານມາ ແລະ ຍົກໃຫ້ເຫັນເຖິງ ການຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດຄັ້ງທີ V ເປັນຕົ້ນແມ່ນຄຳເຫັນຊີ້ນຳຂອງສະຫາຍ ເລຂາທິການໃຫຍ່ຕໍ່ກອງປະຊຸມດັ່ງກ່າວ ດ້ວຍການຍົກສູງຄຸນນະພາບການເມືອງ-ແນວຄິດ ເຂົ້າໃນຊີວິດສັງຄົມຕົວຈິງໃນໄລຍະໃໝ່.

2. ຫົວໜ້າ ຄຕພ ໄດ້ເຂົ້າອວຍພອນລັດຖະມົນຕີກະຊວງປ້ອງກັນປະເທດ ໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ



ວັນທີ 18 ມັງກອນ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ເຂົ້າອວຍພອນ ສະຫາຍ ຈັນສະໝອນ ຈັນຍາລາດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ພ້ອມດ້ວຍພະນັກງານການນຳຂອງກະຊວງ ໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20/01/1949-20/01/2023), ຊຶ່ງ ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມພູມໃຈ ແລະ ຊົມເຊີຍ ຕໍ່ຜົນສຳເລັດທີ່ກອງທັບປະຊາຊົນລາວ ພາຍໃຕ້ການຊີ້ນຳ-ບັນຊາຂອງກະຊວງປ້ອງກັນປະທດ ໃນໄລຍະຜ່ານມາ, ສາມາດປົກປ້ອງອຳນາດອະທິປະໄຕພື້ນແຜນດິນ ອັນຄົບຖ້ວນ ໃຫ້ປວງຊົນລາວທັງຊາດ ໄດ້ທຳມາຫາກິນ ດ້ວຍຄວາມສະຫງົບປອດໄພ.

3. ຄະນະນຳ ຄຕພ ອວຍພອນເອກອັກຄະລັດຖະທູດ ສສ ຫວຽດນາມ ໃນໂອກາດບຸນປີໃໝ່ຫວຽດນາມ



ວັນທີ 18 ມັງກອນ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ເຂົ້າອວຍພອນ ສະຫາຍເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ພ້ອມ ພະນັກງານສະຖານທູດ ທີ່ນະຄອນຫຼວງວຽງຈັນ ເນື່ອງໃນໂອກາດບຸນປີໃໝ່ປະຈຳຊາດຫວຽດນາມ 2023.

ໂອກາດດັ່ງກ່າວ, ສະຫາຍ ສົມພອນ ສີຈະເລີນ ໄດ້ສະແດງຄວາມປິຕິຊົມຊື່ນ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳ ເລັດອັນໃຫຍ່ຫຼວງ, ສຳຄັນ ທີ່ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ ໂດຍພາຍໃຕ້ການ ນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງ ພັກກອມມູນິດຫວຽດນາມ, ເຮັດໃຫ້ ສສ ຫວຽດນາມ ນັບມື້ນັບມີ ສະຖຽນລະພາບອັນໜັກແໜ້ນດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວດ້ວຍຈັງຫວະໄວ, ຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ສືບຕໍ່ໄດ້ຮັບການປັບປຸງດີຂຶ້ນ, ການພົວພັນຮ່ວມມືກັບຕ່າງປະເທດ ນັບມື້ນັບໄດ້ຮັບການເປີດກວ້າງ, ຖານະບົດບາດ ແລະ ອິດທິພົນຂອງພັກ, ລັດຖະບານ ຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ໄດ້ສະແດງ ຄວາມປິຕິຊົມຊື່ນ ທີ່ເຫັນວ່າ ຕະຫຼອດໄລຍະຜ່ານມາ, ຄະນະພົວພັນຕ່າງປະເທດສູນກາງ ພັກ ປປ ລາວ ໃນຖານະທີ່ ເປັນເສນາທິການໃນວຽກງານການຕ່າງປະເທດຂອງສູນກາງພັກ ໄດ້ມີການປະສານສົມທົບຢ່າງແໜ້ນແຟ້ນ, ຄ່ອງຕົວ ແລະ ທັນການກັບ ສະຖານທູດ ສສ ຫວຽດນາມ ປະຈຳ ສປປ ລາວ ໃນການເປັນຂົວເຊື່ອມມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນ 2 ຊາດ ລາວ-ຫວຽດນາມ, ໂດຍສະເພາະ ການປະກອບສ່ວນເຂົ້າໃນການຈັດບັນດາກິດຈະກຳສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ 2022, ການຊຸກຍູ້ຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງຂອງ 2 ພັກ, 2 ລັດຖະບານ ລາວ-ຫວຽດ ນາມ ແລະ ອື່ນໆ ຢ່າງມີຜົນສຳເລັດ.

### 4. ຄະນະນຳ ຄຕພ ອວຍພອນເອກອັກຄະລັດຖະທູດ ສປ ຈີນ ໃນໂອກາດບຸນປີໃໝ່ຈີນ



ວັນທີ 19 ມັງກອນ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ເຂົ້າອວຍພອນ ສະຫາຍເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ພ້ອມ ພະນັກງານສະຖານທູດ ທີ່ນະຄອນຫຼວງວຽງຈັນ ເນື່ອງໃນໂອກາດບຸນປີໃໝ່ປະຈຳຊາດຈີນ 2023.

ໃນໂອກາດດັ່ງກ່າວ, ສະຫາຍ ສົມພອນ ສີຈະເລີນ ໄດ້ຕາງໜ້າໃຫ້ ຄະນະພັກ, ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ອວຍພອນໄຊອັນປະເສີດ ມາຍັງ ສະຫາຍເອກອັກຄະລັດຖະທູດ ແລະ ພະນັກງານສະຖານທູດຈີນ ທີ່ນະຄອນຫຼວງວຽງຈັນ ທຸກຖ້ວນໜ້າໃນໂອກາດປີໃໝ່ຈີນ, ສະຫາຍ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານອັນພົ້ນເດັ່ນ ທີ່ສະຫາຍເອກອັກຄະລັດຖະທູດ ກໍຄື ສະຖານທູດຈີນ ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ, ໂດຍສະເພາະການກະກຽມຢ່າງຮອບດ້ານ ໃຫ້ແກ່ຜົນສຳເລັດຂອງການຢ້ຽມຢາມລັດຖະກິດ ສປ ຈີນ ຂອງ ສະຫາຍເລຂາທິການໃຫຍ່, ປະທານປະເທດ ສປປ ລາວ ໃນທ້າຍປີ 2022 ຜ່ານມາ, ເຊິ່ງເປັນນິມິດໝາຍໃໝ່ ໃນການພົວພັນຮ່ວມມືລາວ-ຈີນ.

ສອງຝ່າຍ ເປັນເອກະພາບໃນການສືບຕໍ່ ປະສານສົມທົບກັນ ໃນການຈັດຕັ້ງຜັນຂະຫຍາຍບັນດາແຜນການຮ່ວມມື ລະຫວ່າງ 2 ພັກລາວ-ຈີນ, ໂດຍສະເພາະການຮ່ວມກັນກະກຽມຈັດກອງປະຊຸມສຳມະນາທິດສະດີ 2 ພັກລາວ-ຈີນ ຄັ້ງທີ 10; ການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ, ການຮ່ວມມືບຳລຸງສ້າງພະນັກງານ ແລະອື່ນໆ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ພາຍຫຼັງການເປີດປະເທດຂອງ ສປ ຈີນ, ພ້ອມນັ້ນ ສອງຝ່າຍຍັງເອກະພາບໃນການສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນໃນ ການຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈທີ່ການນຳຂັ້ນສູງຂອງ ສອງພັກ, ສອງລັດ ຕົກລົງກັນໃນຜ່ານມາໃຫ້ປະກົດຜົນເປັນຈິງ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງຍາວນານ ແລະ ການສ້າງເປັນຄູ່ຮ່ວມຊະຕາກຳ ລາວ-ຈີນ ໃຫ້ສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງເລິກເຊິ່ງ ແລະ ມີປະສິດທິຜົນຍິ່ງໆຂຶ້ນ.

5. **ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງສະຫາຍເອກອັກຄະລັດຖະທູດ ສປປ ເກົາຫຼີ**



ວັນທີ 20 ມັງກອນ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ລີຢົງຊອນ, ເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ ທີ່ໄດ້ນຳເອົາເອກະສານຜົນສຳເລັດຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 6 ສະໄໝທີ 8 ມາມອບໃຫ້ຄະນະບໍລິຫານງານສູນກາງພັກ ປປ ລາວ. ສະຫາຍ ສົມພອນ ໄດ້ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດຂອງພັກແຮງງານເກົາຫຼີ ທີ່ຍາດມາໄດ້ ໂດຍສະເພາະ ແມ່ນການຕໍ່ສູ້ກັບພະຍາດໂຄວິດ-19, ຕົວເລກຜູ້ຕິດເຊື້ອໃນປັດຈຸບັນ ໃນ ສປປ ເກົາຫຼີ ເປັນສູນ ແລະ ຕົວເລກຜູ້ເສຍຊີວິດຈາກພະຍາດດັ່ງກ່າວ ໃນໄລຍະຜ່ານມາ ມີ 74 ຄົນ, ຖືເປັນຕົວເລກທີ່ຕໍ່າທີ່ສຸດ ໃນໂລກ.

# II. ວຽກງານຂອງອົງການຈັດຕັ້ງມະຫາຊົນ ຄຕພ

**ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນໃນຕໍ່ໜ້າ ຂອງ ຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ**



ວັນທີ 18 ມັງກອນ 2023, ທີ່ສຳນັກງານ ຄຕພ ໄດ້ຈັດກອງປະຊຸມສະຫຼຸບປີ 2022 ຂອງ ຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ພາຍໃຕ້ການເປັນປະທານຂອງ ສະຫາຍ ຄຳເຜື້ອງ ພັນທະໄຊ, ກຳມະການຄະນະພັກ, ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມ ປປ ລາວ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໃຫ້ກຽດເຂົ້າຮ່ວມໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ຍັງມີຕາງໜ້າບັນດາໜ່ວຍພັກ, ອົງການຈັດຕັ້ງກຳມະບານ, ແມ່ຍິງ ແລະ ສະມາຊິກຊາວໜຸ່ມທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ໃນກອງປະຊຸມ, ສະຫາຍ ຄຳເຜື້ອງ ພັນທະໄຊ ໄດ້ຂຶ້ນຜ່ານບົດສະຫຼຸບປະຈຳປີ 2022 ແລະ ສະເໜີທິດທາງແຜນການ ປະຈຳປີ 2023. ຕະຫຼອດໄລຍະປີ 2022, ຄະນະຊາວໜຸ່ມ ຄຕພ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນແມ່ນການສຶກສາອົບຮົມການເມືອງ-ແນວຄິດ ເຮັດໃຫ້ສະມາຊິກຊາວໜຸ່ມພາຍໃນ ຄຕພ ມີແນວຄິດອຸ່ນອ່ຽງທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ສາມາດເຊື່ອມຊຶມແນວທາງນະໂຍບາຍ, ມະຕິຄຳສັ່ງຂອງພັກ ແລະ ກົດ ໝາຍຂອງລັດ ນຳມາຜັນຂະຫຍາຍໃຫ້ເປັນແຜນງານ, ໂຄງການເຄື່ອນໄຫວຂອງຕົນ; ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະ ທີ່ເປັນໜ້າທີ່ການເມືອງຕົ້ນຕໍຂອງຕົນ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດສູງ, ຄຽງຄູ່ກັບການເຄື່ອນໄຫວກິດຈະກຳຕ່າງໆ ເຊັ່ນ: ຂະບວນການ 4 ບຸກ, ການຈັດພົບປະແລກປ່ຽນບົດຮຽນໃນຫົວຂໍ້ສະເພາະ ແລະ ການຈັດກອງປະຊຸມສຳມະນາສາກົນ (ແບບຈຳລອງ) ຫົວຂໍ້ "ການຫັນເປັນດິຈິຕອນ ແລະ ລະບຽບການໃໝ່ຂອງໂລກ" ຮ່ວມກັບຊາວໜຸ່ມບັນດາອົງການອ້ອມຂ້າງສູນກາງພັກ. ນອກນັ້ນ, ຍັງໄດ້ເຄື່ອນໄຫວຮ່ວມກັບສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ຊາວໜຸ່ມກະຊວງອົງການ ໃນການປະກອບສ່ວນຊ່ວຍເຫຼືອສັງຄົມ ເຊັ່ນ: ການບໍລິຈາກເລືອດ, ນຳເອົາເຄື່ອງນຸ່ງຫົ່ມໄປຊ່ວຍເຫຼືອປະຊາຊົນຢູ່ເຂດຫ່າງໄກສອກຫຼີກ.

ກອງປະຊຸມ ໄດ້ຮັບຟັງການໂອ້ລົມ ຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ເຊິ່ງໄດ້ຍ້ອງຍໍຊົມເຊີຍຜົນງານທີ່ ຄະນະຊາວໜຸ່ມ ຄຕພ ຍາດມາໄດ້ໃນປີຜ່ານມາ ແລະ ໃຫ້ທິດຊີ້ນຳ ຕໍ່ວຽກງານບູລິມະສິດຈຳນວນໜຶ່ງ ທີ່ຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນຕໍ່ໜ້າ, ອັນໄດ້ກາຍເປັນເຂັມຊີ້ທິດເຍືອງທາງ, ທັງເປັນການໃຫ້ກຳລັງໃຈອັນແຮງກ້າ ໃຫ້ແກ່ສະມາຊິກຊາວໜຸ່ມທົ່ວຄະນະພົວພັນຕ່າງປະເທດສູນກາງພັກ.